# ລາຍງານການປ່ຽນແປງສຳລັບ CalWORKs ແລະ CALFRESH

| ຊື່ສຳນວນ: | |
|---|---|
| ເລກທີສຳນວນ: | |
| ໝາຍເລກພະນັກງານ: | |

**ເນື່ອງຈາກທ່ານໄດ້ຮັບ ☐ CalWORKs ☐ CalFresh, ທ່ານຕ້ອງລາຍງານພາຍໃນ 10 ວັນ ເມື່ອລາຍໄດ້ລວມຂອງທ່ານສູງເຖິງລະດັບ ທີ່ກຳນົດໄວ້.** ທ່ານຕ້ອງລາຍງານໃນເວລາໃດກໍ່ຕາມ ທີ່ລາຍໄດ້ລວມຕໍ່ເດືອນຂອງຄົວເຮືອນຂອງທ່ານສູງ ກາຍລະດັບລາຍໄດ້ປັດຈຸບັນທີ່ກຳນົດໄວ້ສຳລັບ ການລາຍງານ (Income Reporting Threshold: IRT).

| ປະເພດຜົນປະໂຫຍດ | CalWORKs | CalFresh |
|---|---|---|
| ຂະໜາດຄອບຄົວ | | |
| ລາຍໄດ້ປັດຈຸບັນຂອງທ່ານ | | |
| **IRT ຂອງທ່ານແມ່ນ** | | |

**ໝາຍເຫດ:** ຖ້າວ່າ IRT ຂອງທ່ານສຳລັບ CalFresh ໄດ້ຖືກ ລະບຸໄວ້ວ່າ “N/A”, ທ່ານບໍ່ຈຳເປັນຕ້ອງ ລາຍງານການປ່ຽນແປງດ້ານລາຍໄດ້ສຳລັບ CalFresh ຈົນກວ່າຈະຮອດ SAR 7 ຂອງທ່ານ ຄັ້ງຕໍ່ໄປ ຫຼື ການຢັ້ງຢືນຄືນໃໝ່ຄັ້ງຕໍ່ໄປ, ອັນໃດກໍໄດ້ທີ່ມາຮອດກ່ອນ. ຢ່າງໃດກໍຕາມ, ຖ້າວ່າ ທ່ານມີຈຳນວນ IRT ທີ່ລະບຸໄວ້ສຳລັບ CalWORKs, ທ່ານຕ້ອງລາຍງານເມື່ອລາຍໄດ້ ລວມຂອງທ່ານ ກາຍຈຳນວນທີ່ກຳນົດໄວ້ນັ້ນ.

## <u>ຈະລາຍງານແນວໃດ?</u>

ຖ້າລາຍໄດ້ທັງໝົດຂອງທ່ານເກີນຈຳນວນ IRT ທີ່ຈັດເປັນລາຍການໄວ້ຂ້າງເທິງ, ທ່ານຕ້ອງລາຍງານອັນນີ້ໃຫ້ກັບທາງຄາວຕີ້ **ພາຍໃນ 10 ວັນ.** ທ່ານສາມາດລາຍງານຂໍ້ມູນນີ້ໃຫ້ກັບທາງຄາວຕີ້ໄດ້ ໂດຍການໂທຫາຄາວຕີ້ ຫຼືລາຍງານເປັນລາຍລັກອັກສອນ.

<u>ດ້ວຍຄຳວ່າ “ລາຍໄດ້ປະຈຳເດືອນທັງໝົດ” ພວກເຮົາໝາຍເຖິງ:</u>

- ⇨ ເງິນຈຳນວນໃດໜຶ່ງທີ່ທ່ານໄດ້ຮັບ (ທັງທີ່ຫາໄດ້ **ແລະໄດ້ມາໂດຍບໍ່ໄດ້ຫາ**).
- ⇨ ຈຳນວນເງິນ*ກ່ອນ*ຈະມີການຫັກອັນໃດອັນໜຶ່ງອອກ. (ຕົວຢ່າງຂອງການຫັກອອກໄດ້ແກ່: ພາສີ, ປະກັນສັງຄົມ ຫຼືການປະກອບສ່ວນໃຫ້ການບຳນານຕ່າງໆ, ການສິ່ງຍຶດ, ອື່ນໆ.)

## <u>ຈະເກີດອັນໃດຂຶ້ນ?</u>

- ⇨ ເງິນຊ່ວຍເຫຼືອຂອງທ່ານອາດຈະຫຼຸດລົງ ຫຼືຖືກຢຸດໄປ ອີງຕາມລາຍໄດ້ຕໍ່ IRT ຂອງທ່ານ.
- ⇨ IRT ຂອງທ່ານອາດຈະປ່ຽນແປງ ເມື່ອລາຍໄດ້ຂອງທ່ານມີການປ່ຽນແປງ ຫຼືເມື່ອມີຄົນຍ້າຍເຂົ້າມາຢູ່ ຫຼືຍ້າຍອອກໄປຈາກເຮືອນຂອງທ່ານ.
- ⇨ ທາງຄາວຕີ້ຈະບອກໃຫ້ທ່ານຮູ້ເປັນລາຍລັກອັກສອນທຸກຄັ້ງທີ່ມີການປ່ຽນແປງໃນ IRT ຂອງທ່ານ.
- ⇨ ທ່ານຍັງຈຳເປັນຕ້ອງລາຍງານໃນລະຫວ່າງການກຳນົດ/ການຢັ້ງຢືນ (redetermination/recertification, RD/RC) ຄືນໃໝ່ປະຈຳປີຂອງທຸກລາຍໄດ້ທີ່ຖາມຢູ່ໃນແບບຟອມ RD/RC, ແມ້ວ່າທ່ານໄດ້ລາຍງານເງິນນັ້ນຮຽບຮ້ອຍແລ້ວກໍ່ຕາມ.

## <u>ການລົງໂທດທີ່ບໍ່ລາຍງານ</u>

ຖ້າທ່ານບໍ່ລາຍງານ ເມື່ອລາຍໄດ້ຂອງທ່ານມີຫຼາຍກວ່າຂີດຈຳກັດ IRT ຂອງຄອບຄົວຂອງທ່ານ, ທ່ານອາດຈະໄດ້ຮັບເງິນຊ່ວຍເຫຼືອຫຼາຍກວ່າທີ່ທ່ານຄວນຈະໄດ້ຮັບ. ທ່ານ**ຕ້ອງ**ຈ່າຍເງິນຊ່ວຍ ເຫຼືອພິເສດໃດໜຶ່ງທີ່ທ່ານໄດ້ຮັບຕາມລາຍຮັບທີ່ທ່ານບໍ່ໄດ້ລາຍງານນັ້ນຄືນ. ຖ້າທ່ານບໍ່ລາຍງານ ໂດຍມີຈຸດປະສົງທີ່ຈະພະຍາຍາມໃຫ້ໄດ້ຮັບເງິນຊ່ວຍເຫຼືອເພີ່ມ, ອັນນີ້ຈະເປັນການສໍ້ໂກງ, ແລະທ່ານອາດຈະຖືກກ່າວຫາດ້ວຍຂໍ້ຫາອາຊະຍາກຳ.

**ເນື່ອງຈາກທ່ານໄດ້ຮັບ CalWORKs, ທ່ານ<u>ຍັງຕ້ອງ</u>ລາຍງານສິ່ງຕ່າງໆຢູ່ລຸ່ມນີ້<u>ພາຍໃນ 10 ວັນ</u> ເມື່ອພວກມັນເກີດຂຶ້ນ:**

1. ທຸກຄັ້ງທີ່ມີຄົນຍ້າຍເຂົ້າ ຫຼືຍ້າຍອອກຈາກຄົວເຮືອນຂອງທ່ານ.
2. ທຸກຄັ້ງທີ່ມີຄົນເຂົ້າຮ່ວມ, ຫຼືຢູ່ໃນຄອບຄົວຂອງທ່ານ, ຜູ້ທີ່ມີການລະເມີດເງື່ອນໄຂຕ້ອງລາຍງານຕົວເປັນປົກກະຕິ ຫຼືຝາກໂທດຢູ່.
3. ທຸກຄັ້ງທີ່ມີຄົນເຂົ້າຮ່ວມ, ຫຼືຢູ່ໃນຄອບຄົວຂອງທ່ານ, ຜູ້ທີ່ກຳລັງຫຼົບໜີກົດໝາຍ.
4. ທຸກຄັ້ງທີ່ທ່ານປ່ຽນແປງທີ່ຢູ່.

**ຖ້າວ່າ ທ່ານໄດ້ຮັບ CalFresh, ທ່ານ <u>ຍັງຕ້ອງ</u> ລາຍງານສິ່ງຕໍ່ໄປນີ້:**

- ຖ້າທ່ານເປັນຜູ້ໃຫຍ່ທີ່ມີຮ່າງກາຍປົກກະຕິໂດຍບໍ່ມີຜູ້ຂຶ້ນກັບ (Able Bodied Adult Without Dependents, ABAWD), ທ່ານຕ້ອງລາຍງານທຸກຄັ້ງທີ່ຊົ່ວໂມງເຮັດວຽກ ຫຼືການຝຶກຫຼຸດລົງ *ໜ້ອຍກວ່າ* 20 ຊົ່ວໂມງຕໍ່ອາທິດ ຫຼື 80 ຊົ່ວໂມງຕໍ່ເດືອນ.

## <u>ຂໍ້ມູນການລາຍງານຕາມຄວາມສະໝັກໃຈ</u>

ທ່ານຍັງອາດຈະລາຍງານການປ່ຽນແປງໃຫ້ກັບທາງຄາວຕີ້ດ້ວຍຄວາມສະໝັກໃຈໄດ້ທຸກເວລາ. *ການລາຍງານການປ່ຽນແປງບາງອັນອາດຈະເຮັດໃຫ້ທ່ານໄດ້ຮັບເງິນຊ່ວຍເຫຼືອເພີ່ມຂຶ້ນ.* ຕົວຢ່າງ:

- ມີຄົນຢູ່ໃນເຮືອນຖືພາ.
- ຄົນທີ່ໄດ້ຮັບການຊ່ວຍເຫຼືອເງິນສົດມີຄວາມຕ້ອງການພິເສດເຊັ່ນ: ມີການຖືພາ, ກິນອາຫານພິເສດຕາມທ່ານໝໍສັ່ງ, ຄວາມສຸກເສີນຂອງຄອບຄົວ, ອື່ນໆ.
- ສຳລັບ CalFresh, ຖ້າມີຄົນພິການ ຫຼືອາຍຸ 60 ຫຼືແກ່ກວ່ານັ້ນມີຄ່າໃຊ້ຈ່າຍທາງການແພດອັນໃໝ່ ຫຼືເກີນການຄຸ້ມຄອງທີ່ມີໃຫ້.